## ຂໍ້ສຳຄັນ

ໂຄງການເປັນຜູ້ຮັບຜິດຊອບຄ່າໃຊ້ຈ່າຍທັງໝົດເຊັ່ນ: ການວາງແຜນ, ການຈັດການປະຊຸມ ແລະ ການຈັດຕັ້ງປະຕິບັດການຈັດສັນຍົກຍ້າຍຄ່າໃຊ້ຈ່າຍໃນການຂົນສົ່ງ ຫຼື ການຊ່ວຍເຫຼືອວັດຖຸ, ຄ່າສະບຽງອາຫານເປັນເງິນ ຫຼື ເປັນວັດຖຸໃນໄລຍະຂ້າມຜ່ານ ແລະ ທົດແທນການສູນເສຍລາຍຮັບໃນໄລຍະຟື້ນຟູຊີວິດການເປັນຢູ່.
(ດຳລັດນາຍົກລັດຖະມົນຕີ 192/ນຍ, ມາດຕາທີ7)

ການປູ່ນແທນທີ່ດິນກະສິກຳ, ທີ່ຢູ່ອາໃສ ແລະ ການປູ່ນແທນທີ່ດິນສຳລັບທຸລະກິດຂອງປະຊາຊົນຕ້ອງມີໃບຕາດິນ ແລະ ໃບຢັ້ງຢືນກຳມະສິດທີ່ດິນໂດຍບໍ່ມີຄ່າໃຊ້ຈ່າຍເພີ່ມເຕີມນັບທັງການເສຍພາສີ-ອາກອນ ແລະ ຄ່າທຳນຽມຕ່າງໆ. ຕໍ່ດິນສຳລັບກໍ່ສ້າງຕ້ອງຈັດສັນຕາມລະບຽບການ ແລະ ມາດຕະຖານໃນການອອກແບບຜັງເມືອງ.
(ດຳລັດນາຍົກລັດຖະມົນຕີ 192/ນຍ, ມາດຕາທີ10, ຂໍ້2)

ເຈົ້າຂອງໂຄງການຕ້ອງເອົາໃຈໃສ່ຕໍ່ຊັບສິນວັດທະນະທຳ,ສາດສະໜາ, ຮີດຄອງປະເພນີຂອງທ້ອງຖິ່ນປະຕິບັດຜ່ານມາໃນໄລຍະການວາງແຜນ, ກໍ່ສ້າງ ແລະ ດຳເນີນໂຄງການ.
(ດຳລັດນາຍົກລັດຖະມົນຕີ 192/ນຍ, ມາດຕາ11 ໝວດ4)

ການອຸດໜູນຕ່າງໆ ປະຊາຊົນທີ່ຖືກຍົກຍ້າຍທັງໝົດຕ້ອງໄດ້ຮັບການອຸດໜູນຢ່າງພຽງພໍອາດເປັນທັງອາຫານ ຫຼື ເປັນເງິນສົດໄປເຖິງການຟື້ນຟູຊີວິດການເປັນຢູ່ຢ່າງເຕັມສ່ວນ ໂດຍໃຫ້ສອດຄ່ອງກັບເປົ້າໝາຍທີ່ກຳນົດໄວ້ໃນແຜນຍົກຍ້າຍຈັດສັນ.
(ຂໍ້ກຳນົດ-ວ່າດ້ວຍການຈັດຕັ້ງ 2432, ໝວດທີ4 ມາດຕາ22, ຂໍ້9)

ໄລຍະຂ້າມຜ່ານຂອງການຍົກຍ້າຍປະຊາຊົນຈະຖືກຫຍໍ້ໃຫ້ສັ້ນລົງ ແລະ ວຽກການເວນຄືນທີ່ດິນ, ທົດແທນຄ່າເສຍຫາຍ, ວຽກຍົກຍ້າຍຈັດສັນປະຊາຊົນ ແລະ ຟື້ນຟູເສດຖະກິດສ່ວນໃດສ່ວນໜຶ່ງ ຫຼື ໄລຍະໃດໜຶ່ງຂອງໂຄງການ, ຍົກເວັ້ນແຕ່ກໍລະນີມີການສະເໜີມາດຕະການຟື້ນຟູເສດຖະກິດໄລຍະຍາວເຊັ່ນ: ການຝຶກອົບຮົມວິຊາຊີບຕ້ອງສຳເລັດຢ່າງໜ້ອຍ 1ເດືອນກ່ອນການກໍ່ສ້າງໂຄງການ
(ຂໍ້ກຳນົດ-ວ່າດ້ວຍການຈັດຕັ້ງ2432, ໝວດທີ3 ມາດຕາ12, ຂໍ້3)

## ເອກະສານອ້າງອີງ

ດຳລັດເລກທີ192/ນຍ, ວັນທີ7/7/2005 ວ່າດ້ວຍການທົດແທນຄ່າເສຍຫາຍ ແລະ ການຍົກຍ້າຍຈັດສັນປະຊາຊົນຈາກໂຄງການພັດທະນາຂໍ້ກຳນົດ.

ຂໍ້ກຳນົດວ່າດ້ວຍການຈັດຕັ້ງປະຕິບັດດຳລັດວ່າດ້ວຍການທົດແທນຄ່າເສຍຫາຍ ແລະ ການຍົກຍ້າຍຈັດສັນປະຊາຊົນຈາກໂຄງການພັດທະນາ. ຂໍ້ກຳນົດເລກທີ 2432/ອວຕສ-ສນຍ, ວັນທີ11/11/2005.

ປຶ້ມແນະນຳ ເລກທີ່ 707/ກຊສ, ວັນທີ່ 05 ກຸມພາ 2013.

ປຶ້ມແນະນຳວ່າດ້ວຍການມີສ່ວນຮ່ວມ ຂອງປວງມວນຊົນໃນຂະບວນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມຂອງໂຄງການລົງທຶນ.

ປຶ້ມແນະນຳດ້ານວິຊາການວ່າດ້ວຍການທົດແທນຄ່າເສຍຫາຍ ແລະ ການຍົກຍ້າຍຈັດສັນປະຊາຊົນຈາກໂຄງການພັດທະນາ.

### ຂໍ້ມູນເພີ່ມເຕີມ


www.villagefocus.org
Communications@villagfocus.org
Vientiane, Lao PDR
Tel: +856 21 350 740, 21 315 519
Fax: +856 21 315 841



Village Focus International
IWMI International Water Management Institute
CPWF Mekong
Australian AID


# ການຍົກຍ້າຍຈັດສັນ



# ຂໍ້ມູນຂ່າວສານ

***ຊາວບ້ານ ແລະ ພາກສ່ວນທີ່ກ່ຽວຂ້ອງມີສິດທີ່ຈະໄດ້ຮັບຂໍ້ມູນຂ່າວສານຫຍັງຈາກໂຄງການດັ່ງຕໍ່ໄປນີ້?***

- ການຍົກຍ້າຍຈັດສັນຈະເກີດຂຶ້ນເວລາໃດ?
- ມີລັກສະນະຮູບແບບເຮືອນທີ່ຈະໃຫ້ເລືອກ?
- ສະຖານທີ່ ແລະ ທາງເລືອກໃນການຍົກຍ້າຍຈັດສັນ?
- ໃຜເປັນ ຜູ້ມີສິດທີ່ຈະໄດ້ຮັບການສະໜັບສະໜູນໃນການຍົກຍ້າຍ?
- ວັນເລີ່ມຕົ້ນໃນການລົງທະບຽນໃນການຍົກຍ້າຍເມື່ອໃດ?

ເຈົ້າຂອງໂຄງການຕ້ອງໄດ້ເຜີຍແຜ່ຂໍ້ມູນຂ່າວສານຕ່າງໆກ່ຽວກັບຈຸດປະສົງຂອງໂຄງການ, ຮູບແບບການທົດແທນຄ່າເສຍຫາຍທີ່ເກີດຈາກໂຄງການເຊິ່ງເປັນພາກສ່ວນໜຶ່ງຂອງຂະບວນການຍົກຍ້າຍຈັດສັນ ໂດຍຜ່ານສື່ຕ່າງໆເຊັ່ນ: ໂທລະພາບ, ວິທະຍຸ,ໜັງສືພິມ ແລະ ການຈັດປະຊຸມກັບປະຊາຊົນ.
(ດຳລັດນາຍົກລັດຖະມົນຕີ 192/ນຍ, ມາດຕາ12. ຂໍ້ 2)

ເຈົ້າຂອງໂຄງການຕ້ອງເຜີຍແຜ່ຂໍ້ມູນໃຫ້ຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການຊາບກ່ຽວກັບຮ່າງແຜນການຍົກຍ້າຍປະຊາຊົນ ຫຼື ບົດລາຍງານການເວນຄືນທີ່ດິນ ແລະ ການທົດແທນຄ່າເສຍຫາຍໃນຮູບແບບ ແລະ ວິທີທີ່ເຂົ້າໃຈງ່າຍ ແລະ ຢູ່ໃນສະຖານທີ່ທີ່ສາມາດເຂົ້າເຖິງໄດ້ສະດວກ. ສະບັບສຸດທ້າຍ ຫຼື ບົດລາຍງານການເວນຄືນທີ່ດິນ ແລະ ບົດລາຍງານຄ່າເສຍຫາຍຍັງຈະຖືກເຜີຍແຜ່ໃຫ້ຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ ແລະ ໃຫ້ຫ້ອງການທີ່ກ່ຽວຂ້ອງແຂວງ ແລະ ເມືອງຊາບເຊັ່ນດຽວກັນ.
(ຂໍ້ກຳນົດ-ອ່າດ້ວຍການຈັດຕັ້ງ 2432, ມາດຕາ29)

ໂຄງການຕ້ອງແຈ້ງໃຫ້ຜູ້ຖືກຜົນກະທົບຊາບກ່ຽວກັບຄວາມຄືບໜ້າໃນການເຄື່ອນໄຫວໃນການຍົກຍ້າຍປະຊາຊົນພ້ອມທັງຄາດໝາຍເວລາທີ່ຈະສຳເລັດກິດຈະກຳຫຼັກ ຂອງວຽກງານການຍົກຍ້າຍຈັດສັນປະຊາຊົນໂດຍຜ່ານສື່ມວນຊົນ ແລະ ຖ້າບ່ອນໃດມີຄວາມຈຳເປັນກໍ່ຕ້ອງໄດ້ສ້າງສູນຂໍ້ມູນຂ່າວສານສື່ມວນຊົນ, ຢູ່ໃນສະຖານທີ່ທີ່ເໝາະສົມ.
(ຂໍ້ກຳນົດ-ອ່າດ້ວຍການຈັດຕັ້ງ 2432, ມາດຕາ28)

# ຂະບວນການ

***ຊາວບ້ານ ແລະ ໂຄງການຈະຕັດສິນໃຈແນວໃດ, ແລະ ຈະຍ້າຍເວລາໃດ, ຍ້າຍແນວໃດ?***

ເຈົ້າຂອງໂຄງການຕ້ອງທຳການສຳຫຼວດເພື່ອວາງແຜນການຍົກຍ້າຍຈັດສັນຮ່ວມກັບປະຊາຊົນເຊັ່ນ: ການສຳຫຼວດພົນລະເມືອງ, ກຳນົດກຳນົດວັນເລີ່ມຕົ້ນໂຄງການ, ກຳນົດສິດຜູ້ທີ່ມີສິດທີ່ຈະໄດຮັບການທົດແທນພ້ອມທັງຂຶ້ນທະບຽນ.
(ຂໍ້ກຳນົດ-ອ່າດ້ວຍການຈັດຕັ້ງ 2432, ມາດຕາ12)

ປະຊາຊົນທີ່ໄດ້ຮັບຜົນກະທົບຈາກໂຄງການຕ້ອງໄດ້ຮັບການທົດແທນຄ່າເສຍຫາຍຢ່າງເຕັມສ່ວນ, ໄດ້ຮັບການຍົກຍ້າຍຈັດສັນ ແລະ ມີມາດຕະການ ຫຼື ວາງແຜນຟື້ນຟູຊີວິດການເປັນຢູ່ກ່ອນການເລີ່ມຕົ້ນກໍ່ສ້າງໂຄງການ.
(ດຳລັດນາຍົກລັດຖະມົນຕີ 192/ນຍ, ມາດຕາ10)

ເຂດຍົກຍ້າຍຈັດສັນໃໝ່ຕ້ອງມີສິ່ງອຳນວຍຄວາມສະດວກຕ່າງໆດັ່ງນີ້:

- ຕ້ອງຕັ້ງຢູ່ເຂດທີ່ບໍ່ມີຄວາມສ່ຽງທາງດ້ານສິ່ງແວດລ້ອມ
- ຕ້ອງມີຄວາມເໝາະສົມໃນການເຮັດທຸລະກິດ ແລະ ການສ້າງລາຍຮັບ
- ຕ້ອງຢູ່ໃກ້ພື້ນທີ່ໃກ້ຄຽງບ່ອນເກົ່າເທົ່າທີ່ເປັນໄປໄດ້.
- ມີສະພາບແວດລ້ອມເທົ່າເກົ່າ ແລະ ດີກ່ວາເກົ່າ
- ສາມາດເຂົ້າເຖິງໂຮງຮຽນ, ສຸກສາລາ ແລະ ສະຖານທີ່ທາງດ້ານສາດສະໜາ
- ຕ້ອງມີສິ່ງອຳນວຍຄວາມສະດວກຕ່າງໆເຊັ່ນ: ໄຟຟ້າ, ນໍ້າປະປາ, ຄົມມະນາຄົມຂົນສົ່ງ
- ເປັນເຂດທີ່ສາມາດຕອບສະໜອງທາງດ້ານການຜະລິດກະສິກຳ, ປູກຝັງ, ລ້ຽງສັດ
- ພື້ນທີ່ໃໝ່ຕ້ອງໄດ້ຮັບການພັດທະນາສຳເລັດກ່ອນການຍົກຍ້າຍຈັດສັນ

(ຂໍ້ກຳນົດ-ອ່າດ້ວຍການຈັດຕັ້ງ 2432, ມາດຕາ23)



# ການມີສ່ວນຮ່ວມ

ເຈົ້າຂອງໂຄງການຕ້ອງຈັດຕັ້ງປະຕິບັດແຜນການຍົກຍ້າຍຈັດສັນແບບມີສ່ວນຮ່ວມກັບປະຊາຊົນທີ່ຖືກຜົນກະທົບຈາກໂຄງການ, ອຳນາດການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ.
(ດຳລັດນາຍົກລັດຖະມົນຕີ 192/ນຍ, ມາດຕາ12. ຂໍ້1)

ຜູ້ຖືກຜົນກະທົບຕ້ອງສາມາດເຂົ້າເຖິງ ແລະ ປະກອບຄຳຄິດຄຳເຫັນໃສ່ຮ່າງແຜນການຊົດເຊີຍສະບັບສຸດທ້າຍ ແລະ ໄດ້ເຫັນສະບັບກອບປີ
(ຂໍ້ກຳນົດ-ອ່າດ້ວຍການຈັດຕັ້ງ 2432, ມາດຕາ29 ຂໍ້8)

ເຈົ້າຂອງໂຄງການຕ້ອງກຳນົດມາດຕະການຍົກຍ້າຍຈັດສັນປະຊາຊົນ, ປະເພດການຊ່ວຍເຫຼືອສຳລັບການພັດທະນາ, ການເຂົ້າຮ່ວມປຶກສາຫາລືກັບຊຸມຊົນ ແລະ ກົນໄກການແກ້ໄຂຂໍ້ຂັດແຍ່ງບົນພື້ນຖານການປຶກສາຫາລືກັບຊຸມຊົນ, ອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງບໍ່ຫວັງຜົນກຳໄລ.
(ຂໍ້ກຳນົດ-ອ່າດ້ວຍການຈັດຕັ້ງ 2432, ມາດຕາ17, ຂໍ້3)

ທີ່ຕັ້ງເຂດຍົກຍ້າຍຈັດສັນໃໝ່ຕ້ອງໄດ້ຮັບການຄັດເລືອກບົນພື້ນຖານການປຶກສາຫາລື ແລະ ໃຫ້ເປັນທີ່ຮັບຮອງເອົາໂດຍພວກເຂົາເຈົ້າ ແລະ ພື້ນທີ່ຕ້ອງຢູ່ໃກ້ຄຽງກັບພື້ນທີ່ເກົ່າເທົ່າທີ່ເປັນໄປໄດ້.
(ຂໍ້ກຳນົດ-ອ່າດ້ວຍການຈັດຕັ້ງ 2432, ມາດຕາ23)



# KEY POINTS

'APs displaced and or affected due to the loss of income and livelihood shall be providedwiththe following assistance until their income levels and living conditions can be stabilized: (a) Transport allowance or assistance in kind to transfer to the resettlement site or their choice of relocation; (b) Food allowance, in cash or in kind to compensate for income lost, during the transition period; (c) Suitable development assistance after displacement during the transition period until they are able to restore their incomes and living standards or reach the targeted level of household incomes on a sustainable basis.'
(PM Decree 192, Article 7)

'All replacement land for agriculture, residential and businesses shall be provided with secured land titles and certificates and without any additional cost, sales taxes, fee, and surcharge to the APs at the time of transfer.'
(PM Decree 192, Article 10, Paragraph 2)
(Also: Article 24, Paragraph 3, Implementing Regulations)

'During planning, construction and operation periods, project owners shall consider local cultural and religious properties, practices and beliefs.'
(PM Decree 192, Article 11, Paragraph 1)

'Subsistence Allowance: All relocating APs shall receive adequate subsistence allowance in food rations or their cash equivalent during the transition period until the full restoration of livelihood in line with the targets set forth in the RP.'
(Implementing Regulations, Article 22, Paragraph 9)

'Resettlement transition period will be minimized and the acquisition of assets, compensation, resettle ment and rehabilitation activities for a segment/section or phase… will be completed at least one month prior to the initiation of construction work under the respective segment/section or phase thereof.'
(Implementing Regulations, Article 12, Paragraph 3)

# REFERENCES


Land Law. 04/National Assembly. 21 October 2003

Prime Minister Decree No. 192/PM 7 July, 2005 Decree on the Compensation and Resettlement of People Affected by Devel opment Projects.

Regulations for Implementing Decree 192/PM on Compensation and Resettlement of People Affected by Development Projects.Prime Minister's Office Science Technology and Environment Agency (STEA) No 2432 /STEA.

Guidelines on Public Involvement in Environmental and Social Impact Assessments. Ministry of Natural Resources and Environment. Vientiane, 2013.

Technical Guidelines on Compensation and Resettlement in Development Projects. Prime Minister's Office Science Technology and EnvironmentAgency (STEA). November 2005.


## Contact us


www.villagefocus.org
Communications@villagfocus.org
Vientiane, Lao PDR
Tel: +856 21 350 740, 21 315 519
Fax: +856 21 315 841



ENERGY AND MINES
Village Focus International
IWMI International Water Management Institute
CPWF Mekong
Australian AID


# RESETTLEMENT



# INFORMATION

***Villagers and stakeholders have a right to receive what information from the project?***

- When will resettlement take place?
- What are the options for housing styles?
- Where are the options for resettlement locations?
- Who has a right to resettlement support?
- When is the deadline for registration for resettlement support?

'Project owners shall make concerted efforts for an effective public dissemination of information about the objectives of the project, the compensatory package that is part of the resettlement process, through the mass media such as newspapers, radio, TV or public meeting and other means to inform local authorities at provincial, district and village levels and mass organizations, APs(Affected Peoples) and other concerned people as necessary.'
(PM Decree 192, Article 12, Paragraph 2)

'The draft Resettlement Plan(RP) or Land Acquisition and Compensation Report shall be disclosed to Project Affected Persons in a form and manner they can understand and in an easily accessible place… The final detailed Resettlement Plan or Land Acquisition and Compensation Report will also be disclosed to Project Affected Persons and in provincial and district offices.'
(Implementing Regulations 2432, Article 29)

'APs should be kept informed of progress of resettlement activities and targets for completion of key activities through using mass media and where possible, through establishment of Public Information Centres at convenient locations.'
(Implementing Regulations 2432, Article 28)

# PROCESS

***How will villagers and the project decide where, when, and how to resettle?***

The project should produce, with villager input, a resettlement plan before the beginning of project implementation, including definition of affected persons who will be compensated.
(Implementing Regulations, Article 12)

'Prior to the commencement of project construction, APs shall be fully compensated and resettled and rehabilitations measures shall be in place, although not necessarily completed yet.'
(PM Decree192, Article 6, Paragraph 10)

Resettlement areas should have the following characteristics:

- Free from environmental risks;
- Access to business and income-generating opportunities;
- Be located as near as possible to previous locations;
- Have comparable environmental and geographical features better than, or at least equivalent to the affected land;
- Have access to schools, clinics, religious sites;
- Have full services, including water supply, drainage, electricity, telecommunications;
- Each family plot should include sufficient storage space and space to keep livestock and plant kitchen gardens;
- Should be fully developed prior to displacement of APs from their existing locations.



# PARTICIPATION

'The project owners shall implement the resettlement program in a participatory manner ensuring that APs, local authorities and other stakeholders are fully informed and consulted…'
(PM Decree 192, Article 12, Paragraph 1)

'Project Affected Persons shall be given an opportunity to comment on the draft Resettlement Plan or Land Acquisition and Compensation Report before it is finalized.'
(Implementing Regulations, Article 29)

'The proposed resettlement measures, types of development assistance, community participation and consultation framework, and grievance redress mechanism will be developed in consultation with tribal elders, community groups, mass organizations, non-benefit organization and other relevant organizations.'
(Implementing Regulations, Article 17, Paragraph 3)

'Location of resettlement sites must be selected in consultation with [affected people] and it should be acceptable to them.'
(Implementing Regulations, Article 23, Paragraph 6)

